# ຈຳປາແດງຄືນເດີມ

ຫຼາຍຄືນຍັງທັກທ້ວງ     ທັງຖາມສົ່ງອີເມລ໌
ແລ້ວແຕ່ຄວາມສົງສັຍ     ຈຶ່ງໄຕ່ຖາມຕາມເຣື່ອງ
ຍັງຂຸ່ນເຄືອງບໍ່ເຫັນແຈ້ງ     ຈຳປາແດງ ແມ່ນໃຜນໍ?
ຄຶດຈັ່ງໃດກໍບໍ່ພໍ້     ຫຼືນາມຫຍໍ້ ໄດ້ປ່ຽນແປງ

ເລີຍປາກຂໍບອກແຈ້ງ     ບໍ່ໄດ້ແຕ່ງແປງເສີມ  ດອກເດີ
ຈຳປາແດງຄືນາມເດີມ     ເລີ້ມແຕ່ປີ ແປດ ເຈັດ ພຸ້ນ
ເຄີຍອຸດໜູນການກ້າວ     **S C Laos** ໃນເມື່ອກ່ອນ
ຕອນນັ້ນຂຽນເຂົ້າຂັ້ນ     ຍ້ອນຝັນເຟື້ອງເຣື່ອງກະວີ

ແຕ່ວ່າ  ຫວ່າງຫຼາຍປີມານີ້     ພັດມີເຣື່ອງເຄືອງປະສົງ
ອາຈານຄຳຈົງພັດໄລລາ     ຊີພສູນບຸນໜ້ອຍ
ຂ້ອຍພອຍເສັຽໃຈກັ້ນ     ປັນຍາຊົນຜູ້ລືຊື່
ຄືນທີ່ຂ້ອຍນັບຖື  ເຣື່ອງຝີມືຍົກໃຫ້     ອາຈານໄວ້ຢູ່ໃຈ  ຈິງແລ້ວ

ນັບແຕ່ນັ້ນຂ້ອຍຈຶ່ງໄດ້     ລາເລີກທາງຂຽນກອນ
ຫຼອນມາຂຽນບົດເພງ     ແຕ່ງລຳໃຫ້ຄົນຮ້ອງ
ລອງຊອກຫານຳຮ້ານ     ບາງທີພານຕາເບິ່ງ
ຂຽນເພງລຳມາແຕ່ເຫິງ     ດ້ານບັນເທິງບໍ່ນ້ອຍໜ້າ  ມີກີຕ້າຣ໌  ກະພ່ອງກັນ

ບໍ່ໄດ້ປຸນແຕ່ງປັ້ນ     ປ່ຽນຊື່ໃໝ່ໃສ່ນາມແຝງ  ດອກເດີ
ຈຳປາແດງນາມເດີມ     ບໍ່ໄດ້ເສີມຄວາມເຄົ້າ
ແຕ່ກ່ອນຍັງເຄີຍເວົ້າ     ສົນທະນາກັບ  ລາວເກົ່າ  ຢູ່ເດ
ຢູ່ໃນ   **S C Laos**     ຖາມຂ່າວຄາວຮູ້ເຣື່ອງ  ການເມືອງພ້ອມພໍ່າວິຈັຍ

ແຕ່ວ່າ  ຕົກມາຮອດບັ້ນທ້າຍ     ເຫັນເຣື່ອງໃໝ່ກຳລັງເດັດ
ສາວຫຼັກເຈັດເພີ່ນມາແຮງ     ຈຶ່ງແຕ່ງຕາມຖາມນ້ອງ
ປອງຊີໜາຍເປັນຊູ້     ສາວເອີ້ອຍຄຣູຊີເຂົ້າທ່າ
ເຫັນສຳນວນວາຈາ     ຂຽນຜຍາໄດ້ຄ່ອງແຄ້ວ  ປາກແຊວຊູ້ເປັນຄູ່ນາງ

ສາວຫຼັກເຈັດເອີຍ   ແມ່ນຫົວໃຈນ້ອງວ່າງ        ຢ່າວາງທ່າເມີນສູງ ຫຼາຍເດີ
ອ້າຍມຸ້ງໝາຍມາລົມ        ຢ້ານຈິ່ມຊັງໜັງໜ້າ
ເກັບບັນຫາຫົວໃຈໄວ້        ຝັງທາງໃນຄົງລະເບີດ
ເປີດທາງໃຈໃຫ້ແນ່ນ້ອງ ແມ່ນບໍ່ຄາບໍ່ຂ້ອງ ຂໍຈອງເຈົ້າເຂົ້າຢູ່ຊົມ  ອີ່ຫຼີແລ້ວ....